ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---===---

ທະນາຄານແຫ່ງ ສປປ ລາວ

ກົມບັນຊີແລະການເງິນ

ເລກທີ: 272 /ກບງ

ນະຄອນຫຼວງວຽງຈັນ, ວັນທີ: 24 MAY 2017

**ເຖິງ :** ທ່ານຜູ້ອຳນວຍການ ທະນາຄານທຸລະກິດລັດ, ລັດຮຸ້ນສ່ວນ ແລະ ທະນາຄານເອກະຊົນ.

**ເລື່ອງ :** ກ່ຽວກັບການຄາດຄະເນລາຍຈ່າຍ ແລະ ບັນທຶກບັນຊີອາກອນກຳໄລເປັນແຕ່ລະເດືອນ.

- ອີງຕາມກົດໝາຍວ່າດ້ວຍການບັນຊີ ສະບັບປັບປຸງ ສະບັບເລກທີ 47/ສພຊ ລົງວັນທີ 26/12/2013.

ກົມບັນຊີແລະການເງິນ ເຫັນວ່າໃນໄລຍະຜ່ານມາບັນດາທະນາຄານທຸລະກິດ ໄດ້ປະຕິບັດການບັນທຶກບັນຊີມອບອາກອນກຳໄລ ສອດຄ່ອງຕາມກົດໝາຍວ່າດ້ວຍສ່ວຍສາອາກອນ ແລະ ບົດແນະນຳກ່ຽວກັບການປິດບັນຊີປະຈຳປີຂອງ ທະນາຄານທຸລະກິດ ແລະ ສະຖາບັນການເງິນ ທີ່ຂຶ້ນກັບ ທະນາຄານແຫ່ງ ສປປ ລາວ ສະບັບເລກທີ 156/ກບຊ ລົງວັນທີ 28/08/2010, ແຕ່ຍັງມີບາງດ້ານບໍ່ສອດຄ່ອງຕາມມາດຕະຖານສາກົນດ້ານການລາຍງານການເງິນ IAS 12 ອາກອນລາຍໄດ້ ດັ່ງນັ້ນ, ກົມບັນຊີແລະການເງິນ ໄດ້ຄົ້ນຄ້ວາຄືນເພື່ອເຮັດໃຫ້ ທະນາຄານທຸລະກິດ ປະຕິບັດສອດຄ່ອງຕາມມາດຕະຖານສາກົນດ້ານການລາຍງານການເງິນ IAS 12 ອາກອນລາຍໄດ້ ໂດຍໃຫ້ທະນາຄານທຸລະກິດ ຄາດຄະເນລາຍຈ່າຍ ແລະ ບັນທຶກບັນຊີອາກອນກຳໄລເປັນແຕ່ລະເດືອນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຮັບຊາບ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

**ຫົວໜ້າກົມບັນຊີແລະການເງິນ**

ທະນາຄານແຫ່ງ ສປປ ລາວ
ກົມບັນຊີແລະການເງິນ

ນ. ຂັນແກ້ວ ຫຼ້າມະນີເງິາ